# ແຈ້ງການກ່ຽວກັບການປ່ຽນສະຖານະພາບທາງກົດໝາຍຂອງ ເອເອັນແຊັດ ຢູ່ ສປປ ລາວ

ເຖິງ ລູກຄ້າ ເອເອັນແຊັດ ປະຈຳສປປ ລາວທຸກທ່ານ,

ພວກຂ້າພະເຈົ້າຂໍແຈ້ງໃຫ້ທ່ານຊາບກ່ຽວກັບກັບການດຳເນີນທຸລະກິດຂອງທະນາຄານເອເອັນແຊັດໃນ ສປປ ລາວ.

ໃນວັນທີ **8 ເດືອນມີນາ 2019** ເປັນຕົ້ນໄປ ທຸລະກິດຂອງທະນາຄານເອເອັນແຊັດ ຢູ່ໃນ ສປປ ລາວ ຈະຖືກໂອນຈາກທະນາຄານລູກ ກໍຄື ທະນາຄານ ເອເອັນແຊັດ (ລາວ) ຈຳກັດ ເປັນສາຂາຂອງ ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນ ຈຳກັດ ແລະ ຈະກາຍເປັນ ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນ ຈຳກັດ ສາຂາລາວ. ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນ ຈຳກັດ ເປັນໜຶ່ງໃນກຸ່ມບໍລິສັດໃຫຍ່ທີ່ຈົດທະບຽນໃນຕະຫຼາດຫຼັກຊັບອົດສະຕາລີ ເຊິ່ງມີມູນຄ່າຕະຫຼາດ (Market Capitalization) ຫຼາຍກວ່າ AUD$76,000,000,000 (ເຈັດສິບຫົກຕື້ໂດລາອົດສະຕາລີ) ແລະ ມູນຄ່າຊັບສິນລວມແມ່ນຫຼາຍກວ່າ AUD$942,600,000,000 (ເກົ້າຮ້ອຍສີ່ສິບສອງຕື້ຫົກຮ້ອຍລ້ານໂດລາອົດສະຕາລີ) ຊຶ່ງເປັນມູນຄ່ານະວັນທີ 30 ເດືອນ ກັນຍາ 2018.

ພວກເຮົາກຳລັງດຳເນີນການປ່ຽນແປງນີ້ເພື່ອໃຫ້ສອດຄ່ອງກັບຍຸດທະສາດການດຳເນີນທຸລະກິດ ໃນການສຸມໃສ່ການສະໜອງຜະລິດຕະພັນ ແລະ ການບໍລິການໃຫ້ກັບລູກຄ້ານິຕິບຸກຄົນ. ການປ່ຽນແປງນີ້ຈະຊ່ວຍສະໜັບສະໜູນການເຕີບໂຕຂອງການດຳເນີນທຸລະກິດທີ່ຍືນຍົງຂອງພວກເຮົາໃນອະນາຄົດ ຢູ່ໃນ ສປປ ລາວ. ໃບທະບຽນການເປີດສາຂາທະນາຄານແມ່ນໄດ້ຮັບອະນຸມັດ ຈາກພາກສ່ວນລັດຖະບານທີ່ກ່ຽວຂ້ອງແລ້ວ.

**ມັນມີຄວາມໝາຍແນວໃດຕໍ່ທ່ານ**

ຈາກວັນທີ 8 ມີນາ 2019, ທຸກຜະລິດຕະພັນການເງິນ, ບັນຊີ ແລະ ສິນເຊື່ອຕ່າງໆ ທີ່ພວກທ່ານມີກັບທະນາຄານເອເອັນແຊັດ (ລາວ) ຈຳກັດ ຈະຖືກໂອນໄປຫາ ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນ ຈຳກັດ ສາຂາລາວ. ກະລຸນາຮັບຊາບວ່າທ່ານຈະບໍ່ໄດ້ຮັບຜິດຊອບກັບລາຍຈ່າຍຕ່າງໆທີ່ເກີດຂຶ້ນກ່ຽວກັບການ

ໂອນນີ້. ພະນັກງານ, ສະຖານທີ່ຂອງ ທະນາຄານ ແລະ ທີມງານ ພົວພັນລູກຄ້າຂອງທ່ານຈະຍັງຄົງເໝືອນເດີມ.

**ລາຍລະອຽດເພີ່ມເຕີ່ມກ່ຽວກັບການໂອນ**

ພາຍຫຼັງການໂອນສຳເລັດ:

1. ຍອດເງິນໃນບັນຊີຂອງທ່ານຈະຖືກໂອນໄປບັນຊີໃໝ່ຂອງ ກຸ່ມທະນາຄານ ອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ ໃນຊື່ຂອງລູກຄ້າ ແລະ ບັນດາບັນຊີຂອງລູກຄ້າທີ່ຢູ່ກັບ ທະນາຄານເອເອັນແຊັດ (ລາວ) ຈຳກັດ (ANZ Bank (Lao) Limited) ຈະຖືກປິດໂດຍການໂອນຍອດເງິນໃນບັນຊີເຫຼົ່ານັ້ນໄປຫາບັນຊີໃໝ່;
2. ທຸກຄຳຍິນຍອມ, ຄຳສັ່ງທຸລະກຳ, ການມອບສິດ, ຄຳສັ່ງເຄື່ອນໄຫວບັນຊີ (ລວມທັງ ການມອບສິດການຕັດບັນຊີຕ່າງໆ) ທີ່ຍັງມີຢູ່ ຂອງລູກຄ້າ ຈະຖືກໂອນໄປສູ່ ກຸ່ມທະນາຄານ  ອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ ແລະ ມີຜົນບັງຄັບໃຊ້ຕໍ່ກັບບັນຊີໃໝ່ຂອງລູກຄ້າ ກັບ ກຸ່ມທະນາຄານອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ;
3. ຍອດເຫຼືອຂອງສິນເຊື່ອ, ດອກເບ້ຍ ແລະ ຄ່າທຳນຽມຕ່າງໆທັງໝົດທີຍັງມີຢູ່ ແມ່ນຈະຖືກໂອນໄປໃສ່ບັນຊີໃໝ່ໃນຊື່ຂອງລູກຄ້າ ກັບ ກຸ່ມທະນາຄານ ອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ;
4. ການໂອນຂອງ ກຸ່ມທະນາຄານ ອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ ແມ່ນລວມທັງສິດ, ສິດຈົດຈຳນອງ ດອກເບ້ຍ, ໜີ້ສິນ, ໜ້າທີ ແລະ ພັນທະຕ່າງໆ ທີ່ຕິດພັນກັບການບໍລິການຂອງທະນາຄານ ແມ່ນຈະເກີດຂຶ້ນນັບແຕ່ມື້ໂອນ. ກຸ່ມທະນາຄານ ອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ ຈະຖືວ່າມີຄວາມຮັບຜິດຊອບຕໍ່ກັບໜີ້ສິນ ໜ້າທີ່ ແລະ ພັນທະຕ່າງໆທີ່ເກີດຂື້ນຫຼັງຈາກການໂອນໄດ້ສຳເລັດເສັດສິ້ນ ແລະ ທະນາຄານ ເອເອັນແຊັດລາວ ຈຳກັດ (ANZ Bank (Lao) Limited) ແມ່ນຈະບໍ່ມີຄວາມຮັບຜິດຊອບໃດໆຕໍ່ກັບໜີ້ສິນ ຫຼື  ຄວາມຮັບຜິດຊອບຕ່າງໆ ທີ່ຕິດພັນກັບ ການບໍລິການທາງທະນາຄານຂອງລູກຄ້າພາຍຫຼັງທີ່ການໂອນໄດ້ສຳເລັດ;

5. ສິດທັງໝົດ, ດອກເບ້ຍ ແລະ ຜົນປະໂຫຍດຈາກການຄໍ້າປະກັນຕ່າງໆ, ການຊອດຈໍາ, ຄ່າທໍານຽມ ແລະ ຫຼັກຊັບອື່ນໆທີ່ ເຊັ່ນໂດຍ ແລະ/ຫຼື ມອບສິດໂດຍລູກຄ້າ ໃຫ້ແກ່ທະນາຄານເອເອັນແຊັດລາວ ຈໍາກັດ (ລວມມີຄ່າທໍານຽມ ຫຼື ເງິນສົດຄໍ້າປະກັນອື່ນໆຢູ່ໃນບັນຊີ ຫຼື ຄໍ້າປະກັນອື່ນໆໃນບັນຊີການລົງທຶນທີ່ຝາກໄວ້ກັບທະນາຄານຂອງພວກເຮົາ)ຈະຖືກໂອນໄປຫາ ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນຈໍາກັດ ສາຂາລາວ.

ກະລຸນາຮັບຊາບວ່າເລກບັນຊີໃໝ່ຂອງລູກຄ້າ ເຊິ່ງພວກເຮົາໄດ້ແຈ້ງໃຫ້ຊາບກ່ອນໜ້ານີ້ໃນເດືອນ ທັນວາ 2018 ກ່ຽວກັບການນໍາໃຊ້ລະບົບໃໝ່ ເຊິ່ງຈະມີຜົນບັງຄັບໃຊ້ໃນມື້ໂອນ ພວກເຮົາຈະແຈ້ງໃຫ້ລູກຄ້າຊາບເພີ່ມເຕີມໃນໄວໆນີ້ກ່ຽວກັບການປ່ຽນແປງເລກບັນຊີ ແລະ ສິ່ງທີ່ລູກຄ້າຕ້ອງເຮັດ.

ຕໍ່ຈາກນີ້ເປັນຕົ້ນໄປ:

ເອເອັນແຊັດ ຍັງຄົງຍຶດໝັ້ນໃນການດໍາເນີນທຸລະກິດຢູ່ໃນ ສປປ ລາວ. ຖ້າຫາກທ່ານມີຄໍາຖາມເພີ່ມຕື່ມກ່ຽວກັບການປ່ຽນແປງນີ້, ກະລຸນາຕິດຕໍ່ພວກເຮົາຜ່ານທາງ +856 21 222700 ຫຼື ອີເມວ: SupportCenter.ANZBusiness@anz.com.

ທ່ານສາມາດອ່ານຂໍ້ມູນເພີ່ມຕື່ມກ່ຽວກັບການປ່ຽນແປງ ລວມທັງເວລາ ແລະ ຄໍາຖາມທີ່ຖືກຖາມເລື້ອຍໆໄດ້ທີ່ເວັບໄຊ https://institutional.anz.com/markets/laos/en ຫຼື ຕິດຕໍ່ ເອເອັນແຊັດໂດຍກົງຜ່ານທາງ +856 21 222 700 ຫຼື ອີເມວ: SupportCenter.ANZBusiness@anz.com ຫຼື ຂໍ້ມູນເພີ່ມຕື່ມທີ່ເວັບໄຊ້ https://institutional.anz.com/markets/laos/en.